ຄອບຄົວ

ການປະກາດຕໍ່ໂລກ

ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ

ພວກເຮົາ, ຝ່າຍປະທານສູງສຸດ ແລະ ສະພາອັກຄະສາວົກສິບສອງຂອງສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງໄພ່ພົນຍຸກສຸດທ້າຍ, ຂໍປະກາດຢ່າງໜັກແໜ້ນວ່າ ການແຕ່ງງານລະຫວ່າງຊາຍ ແລະ ຍິງ ເປັນການແຕ່ງຕັ້ງຈາກພຣະເຈົ້າ ແລະ ວ່າຄອບຄົວເປັນຈຸດໃຫຍ່ໃຈກາງຕໍ່ແຜນຂອງພຣະຜູ້ສ້າງ ສຳລັບຈຸດໝາຍປາຍທາງນິລັນດອນຂອງລູກໆຂອງພຣະອົງ.

ມະນຸດທຸກຄົນ—ຊາຍ ແລະ ຍິງ—ໄດ້ຖືກສ້າງຂຶ້ນຕາມຮູບຮ່າງລັກສະນະຂອງພຣະເຈົ້າ. ແຕ່ລະຄົນກໍເປັນບຸດ ຫລື ທິດາທາງວິນຍານທີ່ຮັກຫອມຂອງບິດາມານດາແຫ່ງສະຫວັນ, ແລະ, ເມື່ອເປັນເຊັ່ນນັ້ນ, ແຕ່ລະຄົນຈຶ່ງມີຖຳມະຊາດແຫ່ງສະຫວັນ ແລະ ມີຈຸດໝາຍປາຍທາງ. ເພດເປັນບຸກຄະລິກລັກສະນະຖຳມະຊາດຂອງເອກະລັກ ແລະ ຈຸດປະສົງໃນໂລກກ່ອນເກີດ, ໃນໂລກນີ້, ແລະ ໃນນິລັນດອນຂອງແຕ່ລະຄົນ.

ໃນພິມມະຈັກກ່ອນເກີດ, ບຸດ ແລະ ທິດາທາງວິນຍານຮູ້ຈັກ ແລະ ນະມັດສະການພຣະເຈົ້າ ວ່າເປັນພຣະບິດານິລັນດອນຂອງເຂົາ ແລະ ຍອມຮັບເອົາແຜນຂອງພຣະອົງ ຊຶ່ງໃນແຜນນັ້ນ ລູກໆຂອງພຣະອົງຈະໄດ້ຮັບຮ່າງກາຍທີ່ມີເນື້ອໜັງ ແລະ ມີປະສົບການຕ່າງໆຢູ່ໃນໂລກ ເພື່ອຈະໄດ້ພັດທະນາຄົນ ຈົນເຖິງຂັ້ນດີພ້ອມທຸກຢ່າງ ແລະ ໃນທີ່ສຸດບັນລຸຈຸດໝາຍປາຍທາງແຫ່ງສະຫວັນຂອງເຂົາ ໃນຖານະຜູ້ຮັບມໍລະດົກແຫ່ງຊີວິດນິລັນດອນ. ແຜນແຫ່ງຄວາມສຸກຂອງພຣະເຈົ້າເຮັດໃຫ້ຄວາມສຳພັນຂອງຄອບຄົວຍືນຍົງຕໍ່ໄປຫລັງຈາກຄວາມຕາຍ. ພິທີການ ແລະ ພັນທະສັນຍາສັກສິດຕ່າງໆທີ່ມີໄວ້ໃນພຣະວິຫານສັກສິດ ເຮັດໃຫ້ເປັນໄປໄດ້ສຳລັບຜູ້ຄົນທີ່ຈະກັບໄປຫາທີ່ປະທັບຂອງພຣະເຈົ້າ ແລະ ໃຫ້ຄອບຄົວຢູ່ນຳກັນຊົ່ວນິລັນດອນໄດ້.

ພຣະບັນຍັດຂໍ້ທຳອິດທີ່ພຣະເຈົ້າໄດ້ມອບໃຫ້ອາດາມ ແລະ ເອວາ ແມ່ນກ່ຽວກັບສັກກະຍະພາບຂອງເຂົາເຈົ້າທີ່ຈະໄດ້ເປັນພໍ່ແມ່ໃນຖານະສາມີ ແລະ ພັນລະຍາ. ພວກເຮົາຂໍປະກາດວ່າ ພຣະບັນຍັດຂອງພຣະເຈົ້າຕໍ່ລູກໆຂອງພຣະອົງວ່າ ຈົ່ງມີລູກເຕົ້າໃຫ້ແຜ່ຜາຍຂະຫຍາຍທະວີຄູນຈົນເຕັມແຜ່ນດິນໂລກ ຍັງເປັນພຣະບັນຍັດທີ່ໃຊ້ໄດ້ຢູ່. ພວກເຮົາຂໍປະກາດຕື່ມອີກວ່າ ພຣະເຈົ້າໄດ້ບັນຊາວ່າ ອຳນາດທີ່ສັກສິດຂອງການໃຫ້ກຳເນີດແມ່ນຕ້ອງເກີດຂຶ້ນລະຫວ່າງຊາຍ ແລະ ຍິງ, ຜູ້ແຕ່ງງານກັນຢ່າງຖືກຕ້ອງຕາມກົດໝາຍໃນຖານະສາມີ ແລະ ພັນລະຍາເທົ່ານັ້ນ.

ພວກເຮົາຂໍປະກາດວ່າ ມະນຸດຖືກສ້າງຂຶ້ນມາຕາມທີ່ພຣະເຈົ້າໄດ້ຈັດແຕ່ງໄວ້. ພວກເຮົາຂໍຢືນຢັນເຖິງຄວາມສັກສິດຂອງຊີວິດ ແລະ ເຖິງຄວາມສຳຄັນຂອງມັນໃນແຜນນິລັນດອນຂອງພຣະເຈົ້າ.

ສາມີ ແລະ ພັນລະຍາມີໜ້າທີ່ຮັບຜິດຊອບຢ່າງຈິງຈັງທີ່ຈະຮັກ ແລະ ດູແລກັນແລະກັນ ແລະ ລູກໆຂອງຕົນ. “ເດັກນ້ອຍຄືຂອງຂວັນທີ່ພຣະຜູ້ເປັນເຈົ້າໂຜດປະທານ” (ເພງສັນລະເສີນ 127:3). ພໍ່ແມ່ມີໜ້າທີ່ອັນສັກສິດທີ່ຈະລ້ຽງດູລູກໆຂອງຕົນດ້ວຍຄວາມຮັກ ແລະ ດ້ວຍຄວາມຊອບທຳ, ທີ່ຈະຈັດຫາສິ່ງຈຳເປັນທາງກາຍ ແລະ ທາງວິນຍານໃຫ້ເຂົາ, ແລະ ທີ່ຈະສິດສອນເຂົາໃຫ້ຮັກ ແລະ ຮັບໃຊ້ຊຶ່ງກັນແລະກັນ, ເຊື່ອຟັງພຣະບັນຍັດຂອງພຣະເຈົ້າ, ແລະ ເປັນພົນລະເມືອງທີ່ເຊື່ອຟັງກົດໝາຍໃນບ່ອນທີ່ເຂົາອາໄສຢູ່. ສາມີ ແລະ ພັນລະຍາ—ແມ່ ແລະ ພໍ່—ຈະຕ້ອງຮັບຜິດຊອບຢູ່ຕໍ່ພຣະພັກຂອງພຣະເຈົ້າ ເມື່ອງານການບໍ່ປະຕິບັດໜ້າທີ່ຮັບຜິດຊອບເຫລົ່ານີ້ຂອງຕົນ.

ຄອບຄົວແມ່ນຖືກແຕ່ງຕັ້ງຂຶ້ນໂດຍພຣະເຈົ້າ. ການແຕ່ງງານລະຫວ່າງຊາຍ ແລະ ຍິງ ເປັນສິ່ງຈຳເປັນຕໍ່ແຜນນິລັນດອນຂອງພຣະອົງ. ເດັກນ້ອຍມີສິດທີ່ຈະມາເກີດນຳພໍ່ແມ່ທີ່ແຕ່ງງານກັນ, ແລະ ທີ່ຈະໄດ້ຮັບການລ້ຽງດູຈາກພໍ່ແມ່ຜູ້ນັບຖືຄຳໝັ້ນສັນຍາທີ່ໄດ້ກະທຳໄວ້ຕໍ່ກັນ ແລະ ຊື່ສັດບໍລິສຸດຕໍ່ກັນ. ຄອບຄົວຈະມີຄວາມສຸກກໍຕໍ່ເມື່ອເຂົາເຈົ້າດຳເນີນຊີວິດຕາມຄຳສອນຂອງອົງພຣະເຢຊູຄຣິດເຈົ້າ. ການແຕ່ງງານ ແລະ ຄອບຄົວຈະມີຄວາມສຳເລັດໄດ້ໃນຊີວິດກໍຕໍ່ເມື່ອເຂົາເຈົ້າໝັ້ນຄົງຢູ່ໃນຫລັກທຳແຫ່ງສັດທາ, ການອະທິຖານ, ການກັບໃຈ, ການໃຫ້ອະໄພ, ການນັບຖື, ຄວາມຮັກ, ຄວາມເຫັນອົກເຫັນໃຈ, ວຽກງານ, ແລະ ກິດຈະກຳທີ່ໃຫ້ການພັກຜ່ອນຢ່ອນອາລົມທີ່ເປັນປະໂຫຍດຕ່າງໆ. ໃນແຜນຂອງພຣະເຈົ້ານັ້ນ, ພໍ່ຈະເປັນຜູ້ນຳພາຄອບຄົວຂອງຕົນດ້ວຍຄວາມຮັກ ແລະ ດ້ວຍຄວາມຊອບທຳ ແລະ ມີໜ້າທີ່ຮັບຜິດຊອບທີ່ຈະຈັດຫາສິ່ງທີ່ຈຳເປັນໃນຊີວິດ ແລະ ປົກປັກຮັກສາຄອບຄົວຂອງຕົນ. ຜູ້ເປັນແມ່ມີໜ້າທີ່ຮັບຜິດຊອບຕົ້ນຕໍໃນການລ້ຽງດູລູກເຕົ້າຂອງຕົນ. ໃນໜ້າທີ່ຮັບຜິດຊອບອັນສັກສິດເຫລົ່ານີ້, ພໍ່ແມ່ຕ້ອງໄດ້ຊ່ວຍກັນແລະກັນ ແລະ ເປັນຫຸ້ນສ່ວນທີ່ເທົ່າທຽມກັນ. ການພິການ, ການຕາຍ, ຫລື ໃນກໍລະນີອື່ນໆ ອາດເຮັດໃຫ້ໜ້າທີ່ຂອງພໍ່ ຫລື ແມ່ປ່ຽນໄປ. ຍາດຕິພີ່ນ້ອງຄວນຊ່ວຍເຫລືອກັນໃນຍາມຂັດສົນ.

ພວກເຮົາຂໍເຕືອນວ່າ ຜູ້ໃດທີ່ລະເມີດພັນທະສັນຍາແຫ່ງກົດພິມມະຈັນ, ຜູ້ໃດທີ່ທຳຮ້າຍຄູ່ແຕ່ງງານ ຫລື ລູກໆ, ຫລື ຜູ້ໃດທີ່ບໍ່ເຮັດໜ້າທີ່ຂອງຄອບຄົວ ຈະຕ້ອງຮັບຜິດຊອບຢູ່ຕໍ່ພຣະພັກຂອງພຣະເຈົ້າໃນມື້ໜຶ່ງ. ຍິ່ງໄປກວ່ານັ້ນ, ພວກເຮົາຂໍເຕືອນອີກວ່າ ການທຳລາຍຄອບຄົວຈະນຳໄພວິບັດມາສູ່ຕົນເອງ, ມາສູ່ຊຸມຊົນ, ແລະ ມາສູ່ປະເທດຊາດ ດັ່ງທີ່ສາດສະດາທັງຫລາຍໃນສະໄໝບູຮານ ແລະ ໃນສະໄໝປະຈຸບັນກ່າວໄວ້.

ພວກເຮົາຂໍຮຽກຮ້ອງໃຫ້ພົນລະເມືອງ ແລະ ເຈົ້າໜ້າທີ່ລັດຖະບານໃນທຸກທົ່ວໜ້າ ຈົ່ງຊ່ວຍກັນຊຸກຍູ້ຜູ້ຄົນໃຫ້ເຮັດຕາມນີ້ ເພື່ອຈະໄດ້ຮັກສາ ແລະ ເສີມຄວາມເຂັ້ມແຂງໃຫ້ແກ່ຄອບຄົວ ໃນຖານະໜ່ວຍທີ່ສຳຄັນຍິ່ງຂອງສັງຄົມ.

ປະທານກໍດອນ ບີ ຮິງລີ ໄດ້ອ່ານການປະກາດນີ້ໃນຄຳປາໄສຂອງເພິ່ນ
ທີ່ກອງປະຊຸມສະມາຄົມສະຕີສົງເຄາະສາມັນ ເມື່ອວັນທີ *23* ເດືອນກັນຍາ, *1995*, ໃນເມືອງເຊົາເລັກ, ລັດຢູທາ.

Unofficial poster layout of the text published on churchofjesuschrist.org. Not an official publication of The Church of Jesus Christ of Latter-day Saints. Generated by Urim, urim.samuelbaird.com